ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.

***************

ກະຊວງ ການເງິນ

ກົມພາສີ ເລກທີ 0104/ກພສ

ນະຄອນຫຼວງວຽງຈັນ,ວັນທີ 14/10/2009

# ບົດແນະນຳ

# ຂອງຫົວໜ້າກົມພາສີ ວ່າດ້ວຍການປະຕິບັດນະໂຍບາຍ ຕໍ່ຜູ້ມີຜົນງານໃນການປະກອບສ່ວນຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍວ່າດ້ວຍພາສີ.

******************

- ອີງຕາມກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005.
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19.10.2007 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ (ມາດຕາ 89 )
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 2498/ກງ, ລົງວັນທີ 16/10/2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ.

ໃນໄລຍະລໍຖ້າການອອກ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ, ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານໃນການປະກອບສ່ວນຕ້ານ ແລະ ສະກັດກັ້ນການລະເມີດລະບຽບກົດໝາຍພາສີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005 ມາດຕາ 89 ) ແລະ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19.10.2007(ມາດຕາ 22), ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດທົ່ວປະເທດ ແລະ ເພື່ອເປັນການກະຕຸກຊຸກຍູ້ແກ່ຜູ້ທີ່ໃຫ້ການປະກອບສ່ວນຕ້ານ ແລະ ສະກັດກັ້ນ ການລະເມີດລະບຽບກົດໝາຍພາສີ ເຊິ່ງກົດໝາຍໄດ້ກຳນົດໄວ້ແລ້ວ ແລະ ເພື່ອເຮັດໃຫ້ລະບຽບກົດໝາຍໄດ້ຮັບການຈັດຕັ້ງປະຕິບັດມີຜົນສັກສິດ ແລະ ເຂັ້ມງວດ.

ກົມພາສີແນະນຳໃນການປະຕິບັດດນະໂຍບາຍຕໍ່ຜູ້ມີຜົນງານປະກອບສ່ວນເຂົ້າໃນການຕ້ານ ແລະ ສະກັດກັ້ນການລະເມີດລະບຽບກົດໝາຍພາສີ ດັ່ງນີ້ :

1. ຈຸດປະສົງເພື່ອແນະນຳລະອຽດກ່ຽວກັບລະບຽບການ, ວິທີການ ແລະ ມາດຕະການຕ່າງໆ ໃນການປະຕິບັດນະໂຍບາຍຕໍ່ເຈົ້າໜ້າທີ່ພາສີ, ພະນັກງານ, ທະຫານ, ຕຳຫລວດ ແລະ ພໍ່ແມ່ປະຊາຊົນ ທີ່ໄດ້ປະກອບສ່ວນທາງກົງ ຫລື ທາງອ້ອມເຂົ້າໃນການຕ້ານ ແລະ ສະກັດກັ້ນ ການລະເມີດ ລະບຽບກົດໝາຍພາສີທຸກຮູບແບບ, ເພື່ອແນໃສ່ເສີມຂະຫຍາຍສິດເປັນເຈົ້າ ແລະ ການມີສ່ວນຮ່ວມຂອງທຸກຊັ້ນຄົນໃນສັງຄົມຕໍ່ການປະຕິບັດວຽກ

ງານພາສີ, ເຮັດໃຫ້ລະບຽບກົດໝາຍພາສີ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ສາມາດປະຕິບັດມາດຕະການທີ່ເດັດຂາດຕໍ່ຜູ້ລະເມີດ ແລະ ປະຕິບັດນະໂຍບາຍທີ່ສອດຄ່ອງຕໍ່ຜູ້ມີຜົນງານ.

2. ການດໍາເນີນ ແລະ ສະສາງຄະດີທາງພາສີ ແມ່ນສິດ ແລະ ໜ້າທີ່ຂອງລັດຖະການພາສີເທົ່ານັ້ນ ຕາມທີ່ກໍານົດໄວ້ໃນມາດຕາ 65 ກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005 ແລະ ໃຫ້ເອົາໃຈໃສ່ຄື :

ໃນກໍລະນີ ທີ່ພົບເຫັນການກະທໍາຜິດແບບເຊິ່ງໜ້າກ່ຽວກັບການລະເມີດລະບຽບກົດໝາຍພາສີ ( ການກະທໍາຜິດທາງພາສີ ) ເຈົ້າໜ້າທີ່ພາກສ່ວນອື່ນໆ, ພະນັກງານ, ທະຫານ ຫລື ປະຊາຊົນທົ່ວໄປ ກໍສາມາດຈັບຕົວຜູ້ຖືກຫາ ພ້ອມດ້ວຍສິນຄ້າ, ເຄື່ອງຂອງໄດ້. ແຕ່ຫລັງຈາກການຈັບກຸມແລ້ວ ຕ້ອງນໍາຕົວຜູ້ຖືກຫາ ແລະ ສິນຄ້າ, ເຄື່ອງຂອງ ທີ່ຈັບກຸມໄດ້ທັງໝົດ ໄປມອບໃຫ້ແກ່ລັດຖະການພາສີ ບ່ອນໃກ້ທີ່ສຸດໃນທັນໃດ ເພື່ອໃຫ້ເຈົ້າໜ້າທີ່ພາສີເປັນຜູ້ດໍາເນີນຄະດີ ຕາມຂອບເຂດສິດທີ່ກໍານົດໄວ້ໃນມາດຕາ 61 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005.

2.2 ລັດຖະການພາສີແຕ່ລະຂັ້ນ ເຊັ່ນ: ດ່ານພາສີຊາຍແດນ ( ດ່ານສາກົນ ), ພາສີປະຈໍາເຂດ ແລະ ພະແນກການຂອງກົມພາສີ ແມ່ນມີສິດໃນການດໍາເນີນ ແລະ ສະສາງຄະດີ ໂດຍບໍ່ຈໍາກັດມູນຄ່າຂອງຄະດີ, ໝາຍຄວາມວ່າ: ຄະດີເກີດຂຶ້ນຢູ່ບ່ອນໃດແມ່ນໃຫ້ສະສາງຄະດີຢູ່ບ່ອນນັ້ນ ແລະ ຕ້ອງດໍາເນີນຄະດີຕາມຂັ້ນຕອນ ແລະ ປະຕິບັດຕາມມາດຕະການທາງກົດໝາຍຢ່າງເຂັ້ມງວດ ຕາມທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍພາສີ ແລະ ລະບຽບການທີ່ກ່ຽວຂ້ອງ.

2.3 ກໍລະນີ ຄະດີທີ່ບໍ່ສາມາດສົມຍອມກັນຕາມລະບຽບກົດໝາຍໄດ້ ລັດຖະການພາສີແຕ່ລະຂັ້ນ ຕ້ອງນໍາສົ່ງສໍານວນຄະດີດັ່ງກ່າວໃຫ້ຫົວໜ້າກົມພາສີເປັນຜູ້ຕົກລົງ ໝາຍຄວາມວ່າ: ຄະດີໃດທີ່ບໍ່ສາມາດຈັດຕັ້ງປະຕິບັດ ຫຼື ດໍາເນີນການຕາມລະບຽບກົດໝາຍ ເຊັ່ນ: ມີການຮ້ອງຂໍຕໍ່ວ່າ ຫຼື ມີຄວາມຫຍຸ້ງຍາກໃນການດໍາເນີນຄະດີ ຫຼື ອື່ນໆ ແມ່ນໃຫ້ລັດຖະການພາສີທີ່ກ່ຽວຂ້ອງ ປະກອບສໍານວນຄະດີດັ່ງກ່າວສົ່ງໃຫ້ພະແນກນິຕິກໍາ ( ກົມພາສີ ) ພິຈາລະນາ ເພື່ອນໍາສະເໜີຫົວໜ້າກົມພາສີ ເປັນຜູ້ຕົກລົງ, ຖ້າຍັງບໍ່ສາມາດສົມຍອມ ຫຼື ສະສາງຄະດີໄດ້ ກົມພາສີຈິ່ງຈະດໍາເນີນການຕາມຂັ້ນຕອນຂອງກົດໝາຍ ແລະ ຕາມຂະບວນການຍຸດຕິທໍາຕໍ່ໄປ, ໂດຍຈະໄດ້ປະກອບສໍານວນຄະດີສົ່ງໃຫ້ໄອຍະການເພື່ອສັ່ງຟ້ອງສານ ຕາມທີ່ກໍານົດໄວ້ໃນມາດຕາ 61 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005 .

3. ພື້ນຖານການຄິດໄລ່ຄ່າບໍາເນັດແມ່ນ ລາຍຮັບຄ່າປັບໃໝ ແລະ ຂາຍເຄື່ອງຮິບທີ່ໄດ້ມາຈາກການສະສາງຄະດີທາງພາສີ ( ພາຍຫລັງທີ່ໄດ້ຫັກຄ່າສິ້ນເປືອງຕ່າງໆອອກແລ້ວ ).

- ສໍາລັບລາຍຮັບຈາກບການຂາຍໄມ້ ແລະ ແຮ່ທາດ ທີ່ຖືກຮິບ ແມ່ນບໍ່ອະນຸຍາດໃຫ້ຄິດໄລ່ຄ່າບໍາເນັດ.
- ໃນກໍລະນີທີ່ມີລາຍຮັບ ຄ່າປັບໃໝ ແລະ ຂາຍເຄື່ອງຮິບ ຢູ່ໃນຄະດີດຽວກັນ ແມ່ນໃຫ້ເລືອກເອົາລາຍຮັບທີ່ມີມູນຄ່າສູງກວ່າ, ໝາຍຄວາມວ່າ: ບໍ່ໃຫ້ເອົາທັງສອງລາຍຮັບ ໃຫ້ເລືອກເອົາພຽງແຕ່ລາຍຮັບດຽວເທົ່ານັ້ນ, ສ່ວນລາຍຮັບທີ່ບໍ່ຖືກເລືອກ (ລາຍຮັບທີ່ມີມູນຄ່າໜ້ອຍກວ່າ) ແມ່ນໃຫ້ມອບເຂົ້າງົບປະມານທັງໝົດ 100%, ສໍາລັບລາຍຮັບທີ່ຖືກເລືອກນັ້ນ ຕ້ອງນໍາໄປຫັກຄ່າໃຊ້ຈ່າຍສິ້ນເປືອງຕ່າງໆທີ່ໄດ້ໃຊ້ຈ່າຍຕົວຈິງເຊິ່ງພົວພັນໃນການກວດກາ ຫຼື ຈັບກຸມຄະດີດັ່ງກ່າວສ່ວນທີ່ເຫຼືອຈຶ່ງເອີ້ນວ່າ: *ພື້ນຖານຄິດໄລ່ຄ່າບໍາເນັດ.*

⇨ **ຕົວຢ່າງ:** ຄະດີ (ກ) ມີລາຍຮັບຄ່າປັບໃໝ ຈຳນວນ: 5.000.000 ກີບ ແລະ ລາຍຮັບຈາກການຂາຍເຄື່ອງຮິບ ຈຳນວນ: 6.000.000 ກີບ, ຄ່າສິ້ນເປືອງຈຳນວນ: 350.000 ກີບ.

- ໃນກໍລະນີນີ້ ຕ້ອງເລືອກເອົາ *ລາຍຮັບຈາກການຂາຍເຄື່ອງຮິບ* ( 6.000.000 ກີບ ) ເຊິ່ງມີມູນຄ່າສູງກວ່າລາຍຮັບຈາກຄ່າປັບໃໝເຊິ່ງມີພຽງແຕ່ ( 5.000.000 ກີບ ). ໃຫ້ເອົາລາຍຮັບຂາຍເຄື່ອງຮິບດັ່ງກ່າວໄປຫັກຄ່າໃຊ້ຈ່າຍສິ້ນເປືອງຕ່າງໆທີ່ໄດ້ໃຊ້ຈ່າຍຕົວຈິງເຊິ່ງພົວພັນໃນການກວດກາ ຫຼື ຈັບກຸມຄະດີດັ່ງກ່າວ( 350.000 ກີບ ) ສະນັ້ນ ພື້ນຖານຄິດໄລ່ແມ່ນ: 6.000.000 ກີບ ລົບ (-) 350.000 ກີບ = **5.650.000 ກີບ**( *ພື້ນຖານຄິດໄລ່ຄ່າບຳເນັດ* ), ສ່ວນລາຍຮັບຄ່າປັບ ( 5.000.000 ກີບ ) ແມ່ນໃຫ້ມອບ ເຂົ້າງົບປະມານ ທັງໝົດ **100%**.

4. ພະນັກງານ, ທະຫານ, ຕຳຫລວດ, ປະຊາຊົນ ແລະ ເຈົ້າໜ້າທີ່ພາສີ ທີ່ໄດ້ປະກອບສ່ວນເຂົ້າໃນການຕ້ານ ແລະ ສະກັດກັ້ນການຄ້າຂາຍ ແລະ ການມີໄວ້ໃນຄອບຄອງ ສິນຄ້າ, ເຄື່ອງຂອງ ປະເພດຕ້ອງຫ້າມ ເຊັ່ນ: ອາວຸດເສິກ, ສິ່ງເສບຕິດ ທຸກປະເພດ ແລະ ສິນຄ້າ, ເຄື່ອງຂອງ ປະເພດຕ້ອງຫ້າມອື່ນໆທຸກຊະນິດ ຕາມທີ່ກຳນົດໄວ້ໃນມາດຕາ 57 ຂອງ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005, ຈະບໍ່ໄດ້ຮັບຄ່າບຳເນັດເປັນເງິນ ແຕ່ຈະໄດ້ຮັບຄ່າບຳເນັດ ເປັນວັດຖຸ ຫຼື ເປັນການຍ້ອງຍໍ ເຊິ່ງລັດມີນະໂຍບາຍຕອບແທນຕາມຄວາມເໝາະສົມ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ (ມາດຕາ 89) ເຊັ່ນ: ໃບຊົມເຊີຍ, ໃບຍ້ອງຍໍ, ຫຼຽນກາ, ຫຼຽນໄຊ ແລະ ນະໂຍບາຍອື່ນໆຕາມເງື່ອນໄຂຕົວຈິງ, ໂດຍມອບໃຫ້ລັດຖະການພາສີທີ່ກ່ຽວຂ້ອງເປັນຜູ້ສະເໜີການປະຕິບັດນະໂຍບາຍດັ່ງກ່າວ ໃນແຕ່ລະກໍລະນີຂຶ້ນຫາກົມພາສີເພື່ອພິຈາລະນາໃຫ້ທັນເວລາ.

5. ການຄິດໄລ່ ແລະ ການແບ່ງປັນເງິນຄ່າບຳເນັດ ແມ່ນເອົາລາຍຮັບທີ່ໄດ້ຈາກການສະສາງຄະດີ ແລະ ໄດ້ຫັກຄ່າສິ້ນເປືອງອອກແລ້ວຕາມກຳນົດໄວ້ໃນ (ຂໍ້ 3) ຂອງບົດແນະນຳສະບັບນີ້ ມາແບ່ງເພື່ອເປັນເງິນຄ່າບຳເນັດ ແລະ ມອບເຂົ້າງົບປະມານ,ໂດຍໃຫ້ແບ່ງເປັນຄ່າບຳເນັດ **40 %** ແລະ ມອບເຂົ້າງົບປະມານ **60 %** ຕາມທີ່ກຳນົດໄວ້ໃນມາດຕາທີ 22 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19 ຕຸລາ( 10 ) 2007 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ.

⇨ **ຕົວຢ່າງ:** ອີງຕາມຕົວຢ່າງຂອງຄະດີ (ກ) ໃນຂໍ້ 3 ຂ້າງເທິງ ( ພື້ນຖານຄິດໄລ່ຄ່າບຳເນັດ = 5.650.000 ກີບ ) ແມ່ນໃຫ້ຄິດໄລ່ຄ່ບຳເນັດດັ່ງນີ້:

- ມອບເຂົ້າງົບປະມານ( 60% ) : 5.650.000 x 60% = 3.390.000 ກີບ.
- ເງິນຄ່າບຳເນັດ( 40% ) : 5.650.000 x 40% = 2.260.000 ກີບ.

6. ເງິນຄ່າບຳເນັດ 40% ຈະຕ້ອງຄິດໄລ່ແບ່ງປັນເປັນພູດລາຍຈ່າຍຕ່າງໆ, ໂດຍການແບ່ງພູດລາຍຈ່າຍຕ່າງໆ ແມ່ນຄິດໄລ່ຕາມອັດຕາສ່ວນທີ່ກຳນົດໄວ້ ໃນຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 266/ ກງ, ລົງວັນທີ 03 ກຸມພາ 2000, ເປັນການຊົ່ວຄາວໄປກ່ອນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

6.1 ຄະດີທີ່ ລັດຖະການພາສີເປັນຜູ້ຈັບກຸມແລະດຳເນີນຄະດີ :

| | |
|---|---|
| 6.1.1 ຜູ້ບອກຂ່າວ | 25% |
| 6.1.2 ຜູ້ຈັບກຸມ, ກວດພົບ ແລະ ດຳເນີນຄະດີທາງກົງ ຫຼື ທາງອ້ອມ | 35% |

6.1.3 ບູລະນະກິງຈັກຂອງລັດຖະການພາສີທີ່ດຳເນີນຄະດີ 40%

- ໃນກໍລະນີດຳເນີນຄະດີຢູ່ທ້ອງຖິ່ນ ໃຫ້ແບ່ງພູດບູລະນະກິງຈັກຂອງລັດຖະການພາສີເປັນ 02 ພູດໆລະ 50% ແລະມອບໃຫ້ເປັນພູດບູລະນະກິງຈັກກົມພາສີ 01 ພູດ( 50%), ອີກ 01 ພູດ(50%) ແມ່ນພູດບູລະນະກິງຈັກຂອງລັດຖະການພາສີທີ່ດຳເນີນຄະດີ.

- ໃນກໍລະນີບໍ່ມີຜູ້ບອກຂ່າວ ແມ່ນໃຫ້ເອົາພູດຜູ້ບອກຂ່າວເພີ່ມເຂົ້າເປັນພູດຂອງລັດຖະການພາສີທີ່ເຮັດໜ້າທີ່ດຳເນີນຄະດີ.

6.2 ຄະດີທີ່ພາກສ່ວນອື່ນຈັບກຸມແລ້ວມອບໃຫ້ລັດຖະການພາສີດຳເນີນຄະດີ :

6.2.1 ຄ່າຫຳນຽມດຳເນີນຄະດີ 20%

6.2.2 ຜູ້ຈັບກຸມ ແລະ ຜູ້ບອກຂ່າວ 80%

**ຕົວຢ່າງການຄິດໄລ່** :

⇨ **ຕົວຢ່າງ (1)** ການແບ່ງປັນເງິນຄ່າບຳເນັດຂອງ ພະແນກຂອງກົມພາສີ

✸ ເງິນຄ່າບຳເນັດ ( 40% ) = **2.260.000 ກີບ** ມາຕັ້ງເປັນ 100% ແລ້ວຄິດໄລ່ຄື :

- ຜູ້ບອກຂ່າວ ( 25% ) : 2.260.000 x 25% = **565.000 ກີບ**
- ຜູ້ຈັບກຸມ ( 35% ) : 2.260.000 x 35% = **791.000 ກີບ**
- ບູລະນະກິງຈັກຂອງພະແນກ(20%) : 2.260.000 x 20% = **452.000 ກີບ**
- ບູລະນະກິງຈັກຂອງກົມພາສີ(20%) : 2.260.000 x 20% = **452.000 ກີບ**

• ໃນກໍລະນີບໍ່ມີຜູ້ບອກຂ່າວໃຫ້ເອົາພູດຜູ້ບອກຂ່າວມາເພີ່ມໃສ່ພູດບູລະນະກິງຈັກຂອງພະແນກຂອງກົມພາສີ, ໝາຍຄວາມວ່າພູດບູລະນະກິງຈັກຂອງພະແນກຂອງກົມພາສີ ຈະໄດ້ 45% = 1.017.000 ກີບ ຄື: 452.000 ( 20% ) + 565.000 ( 25% ) = **1.017.000 ກີບ**

⇨ **ຕົວຢ່າງ (2)** ການແບ່ງປັນເງິນຄ່າບຳເນັດຂອງລັດຖະການພາສີທ້ອງຖິ່ນ.

✸ ເງິນຄ່າບຳເນັດ ( 40% ) = **2.260.000 ກີບ** ມາຕັ້ງເປັນ 100% ແລ້ວຄິດໄລ່ຄື :

- ຜູ້ບອກຂ່າວ ( 25% ) : 2.260.000 x 25% = **565.000 ກີບ**
- ຜູ້ຈັບກຸມ ( 35% ) : 2.260.000 x 35% = **791.000 ກີບ**
- ບູລະນະກິງຈັກລັດຖະການພາສີທີ່ສະສາງຄະດີ (20%) : 2.260.000 x 20% = **452.000 ກີບ**
- ບູລະນະກິງຈັກຂອງກົມພາສີ (20%) : 2.260.000 x 20% = **452.000 ກີບ**

• ໃນກໍລະນີບໍ່ມີຜູ້ບອກຂ່າວໃຫ້ເອົາພູດຜູ້ບອກຂ່າວມາເພີ່ມໃສ່ພູດບູລະນະກິງຈັກຂອງລັດຖະການພາສີ ທີ່ສະສາງຄະດີ, ໝາຍຄວາມວ່າພູດບູລະນະກິງຈັກຂອງລັດຖະການພາສີທີ່ເຮັດໜ້າທີ່ສະສາງຄະດີ ຈະໄດ້ 45% = 1.017.000 ກີບ ຄື: 452.000 ( 20% ) + 565.000 ( 25% ) = **1.017.000 ກີບ**

⇨ **ຕົວຢ່າງ (3)** : ການແບ່ງປັນຄ່າບຳເນັດຂອງພາກສ່ວນອື່ນທີ່ສົ່ງຄະດີມາໃຫ້ລັດຖະການພາສີດຳເນີນຄະດີ.

✸ ເງິນຄ່າບຳເນັດ ( 40% ) = **2.260.000 ກີບ** ມາຕັ້ງເປັນ 100% ແລ້ວຄິດໄລ່ຄື :

- ຜູ້ຈັບກຸມ ຫລື ພາກສ່ວນຈັບກຸມ ລວມທັງ ຜູ້ບອກຂ່າວ(80%) :2.260.000 x 80% = **1.808.000 ກີບ**

- ຄ່າທຳນຽມດຳເນີນຄະດີຂອງລັດຖະການພາສີ ( 20% ) :2.260.000 x 20% = 452.000 ກີບ

7. ການນຳໃຊ້ເງິນພູດບູລະນະກິງຈັກຂອງລັດຖະການພາສີຂັ້ນຕ່າງໆເຊັ່ນ : ດ່ານພາສີຊາຍແດນ , ພາສີປະຈຳເຂດ, ພະແນກການຂອງກົມພາສີ ແລະ ກົມພາສີ ຕ້ອງນຳໃຊ້ໃຫ້ຖືກຕາມເປົ້າໝາຍໃນການໃຊ້ຈ່າຍຮ່ອງຕ່າງໆ, ເຊິ່ງລາຍຈ່າຍຮ່ອງຕ່າງໆທີ່ກຳນົດໄວ້ປະກອບມີດັ່ງນີ້ :

| | | |
|---|---|---|
| 7.1 | ຄ່າສິ້ນເປືອງໃນການສະສາງຄະດີ | 10% |
| 7.2 | ຊອກຫາຂໍ້ມູນ ແລະ ແຫລ່ງຂ່າວ | 10% |
| 7.3 | ນະໂຍບາຍຕາມມາດຕາ 57 ຂອງກົດໝາຍວ່າດ້ວຍພາສີ | 10% |
| 7.4 | ເງິນອຸດໜູນ | 25% |
| 7.5 | ພັດທະນາບຸກຄະລາກອນ | 25% |
| 7.6 | ເຄື່ອນໄຫວວຽກງານວິຊາສະເພາະ | 20% |

7.7 ລາຍລະອຽດໃນການໃຊ້ຈ່າຍແຕ່ລະຮ່ອງ

7.7.1 ຄ່າສິ້ນເປືອງໃນການສະສາງຄະດີ: ແມ່ນຈ່າຍໃຫ້ແກ່ເຈົ້າໜ້າທີ່ພາສີ ທີ່ປະຈຳຢູ່ຫ້ອງການເຊິ່ງປະຕິບັດໜ້າທີ່ທີ່ກ່ຽວຂ້ອງກັບການດຳເນີນ ແລະ ສະສາງຄະດີ ( ນອກຈາກຜູ້ຈັບກຸມທາງກົງ ຫຼື ທາງອ້ອມ ).

7.7.2 ຊອກຫາຂໍ້ມູນ ແລະ ແຫລ່ງຂ່າວ: ແມ່ນໃຫ້ໃຊ້ຈ່າຍເຂົ້າໃນການ ລົງກໍ່ສ້າງພື້ນຖານປິດລັບ, ໃນການຊອກຫາແຫຼ່ງຂ່າວ ກ່ຽວກັບການເຄື່ອນໄຫວລະເມີດລະບຽບກົດໝາຍວ່າດ້ວຍພາສີ.

7.7.3 ນະໂຍບາຍຕາມມາດຕາ(57)ຂອງກົດໝາຍວ່າດ້ວຍພາສີ: ແມ່ນໃຫ້ໃຊ້ຈ່າຍເງິນຮ່ອງດັ່ງກ່າວເພື່ອຊື້ ວັດຖຸ, ສິ່ງຂອງ ຫຼື ຈ່າຍເປັນຄ່າສິ້ນເປືອງໃນການສະເໜີຂໍນະໂຍບາຍການ ຍ້ອງຍໍຈາກຂັ້ນເທິງ ເພື່ອມອບໃຫ້ແກ່ຜູ້ມີຜົນງານໃນການປະກອບສ່ວນຕ້ານ ແລະ ສະກັດກັ້ນ ຫຼື ຈັບກຸມ ແລະ ດຳເນີນຄະດີ ກ່ຽວກັບການລະເມີດລະບຽບກົດໝາຍຕໍ່ກັບປະເພດສິນຄ້າ, ເຄື່ອງຂອງຕ້ອງຫ້າມທຸກຊະນິດ, ຕາມທີ່ກຳນົດໄວ້ໃນ ມາດຕາ 57 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005.

7.7.4 ເງິນອຸດໜູນ: ແມ່ນໃຫ້ໃຊ້ຈ່າຍເຂົ້າໃນການອຸດໜູນ, ຊ່ວຍເຫຼືອ ຫຼື ຮັກສາປິ່ນປົວ ແລະ ອື່ນໆຕໍ່ເຈົ້າໜ້າທີ່ພາສີ ກໍ່ຄືພະນັກງານພາສີ ຄື :

- ມີໜ້າທີ່ທີ່ກ່ຽວກັບການຕ້ານ ແລະ ສະກັດກັ້ນ ການລະເມີດລະບຽບກົດໝາຍພາສີ ໃນກໍລະນີທີ່ເກີດອຸປະຕິເຫດ ຫຼື ເຫດການທີ່ບໍ່ເພິ່ງປາດຖະໜາອື່ນໆທີ່ເກີດຂຶ້ນໃນເວລາປະຕິບັດໜ້າທີ່.
- ບໍ່ມີໜ້າທີ່ກ່ຽວກັບການຕ້ານ ແລະ ສະກັດກັ້ນ ການລະເມີດລະບຽບກົດໝາຍພາສີ ໃນກໍລະນີທີ່ເກີດອຸປະຕິເຫດ ຫຼື ເຫດການທີ່ບໍ່ເພິ່ງປາດຖະໜາອື່ນໆທີ່ເກີດຂຶ້ນໃນເວລາປະຕິບັດໜ້າທີ່.

7.7.5 ພັດທະນາບຸກຄະລາກອນ: ແມ່ນໃຫ້ນຳໃຊ້ເພີ່ມເຂົ້າໃນໃຊ້ຈ່າຍກ່ຽວກັບ ການພັດທະນາບຸກຄະລາກອນໃຫ້ມີຄຸນນະພາບ ເຊັ່ນ : ການຝຶກອົບຮົມ ແລະ ການໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍພາສີ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.

7.7.5 ເຄື່ອນໄຫວວຽກງານວິຊາສະເພາະ: ແມ່ນໃຫ້ນຳໃຊ້ເພີ່ມເຂົ້າໃນໃຊ້ຈ່າຍກ່ຽວກັບ ການຈັດຊື້ພາຫະນະ, ວັດຖຸອຸປະກອນ ແລະ ເຄື່ອງຮັບໃຊ້ການເຄື່ອນໄຫວວຽກງານພາສີ ແລະ ການໃຊ້

**ຈ່າຍອື່ນໆທີ່ຈຳເປັນ ເຊິ່ງກ່ຽວຂ້ອງກັບການພັດທະນາ ຫຼື ປັບປຸງວຽກງານພາສີ ໃຫ້ມີຄຸນນະພາບ ແລະ ທັນສະໄໝ ໂດຍສະເພາະແມ່ນວຽກງານ ຕ້ານ ແລະ ສະກັດກັ້ນການລັກລອບໜີພາສີ .**

8. ບັນດາລັດຖະການພາສີແຕ່ລະຂັ້ນ ທີ່ໄດ້ເຮັດໜ້າທີ່ດຳເນີນ ແລະ ສະສາງຄະດີ ທາງພາສີຕ້ອງເອົາໃຈໃສ່ປະຕິບັດລະບອບການລາຍງານ, ສ່ອງແສງ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ ເປັນແຕ່ລະ ເດືອນ, ງວດ, ປີ ແລະ ເປັນລາຍລັກອັກສອນ ຫຼື ລາຍງານວິສາມັນໃນການກໍລະນີເກີດເຫດການທີ່ສຳຄັນ, ສຸກເສີນ ແລະ ຮີບດ່ວນ ເຊິ່ງຕ້ອງໄດ້ລາຍງານ ໂດຍດ່ວນທາງໂທລະສັບ ຫລື ໂທລະສານ.

8.1 ເນື້ອໃນການລາຍງານຕາມສະໄໝສາມັນ ( ເດືອນ, ງວດ ແລະ ປີ ) ຕ້ອງມີການສະຫຼຸບ ແລະ ສັງລວມເປັນລາຍລັກອັກສອນໃນການດຳເນີນ ແລະ ສະສາງຄະດີ ຂອງໄລຍະດັ່ງກ່າວເຊັ່ນ : ຄະດີເກີດຂຶ້ນ, ຄະດີສະສາງແລ້ວ, ຄະດີຍັງຄ້າງ, ມູນຄ່າຂອງຄະດີ ແລະ ຂໍ້ມູນອື່ນໆ ເປັນຕົ້ນແມ່ນ ຂໍ້ຫຍຸ້ງຍາກ ແລະ ຄວາມສະດວກໃນການດຳເນີນຄະດີ, ບັນດາຂໍ້ສະເໜີຕ່າງໆ, ໃຫ້ຮູ້ໄດ້ບັນດາຂໍ້ມູນຂ້າງເທິງທີ່ຍົກມາຈາກໄລຍະກ່ອນ,ໃຫ້ຮູ້ໄດ້ລວມຍອດບັນດາຂໍ້ມູນຕ່າງໆມາເຖິງປັດຸບັນ, ນອກນີ້ຍັງຕ້ອງລາຍງານລະອຽດກ່ຽວກັບສະພາບ ລາຍຮັບ - ລາຍຈ່າຍ ທີ່ໄດ້ຈາກການສະສາງຄະດີ ເຊັ່ນ:

8.1.1 ລາຍຮັບ - ລາຍຈ່າຍ ຈາກການສະສາງຄະດີ : ຕ້ອງແຍກໃຫ້ຮູ້ຄ່າພາສີ ແລະ ພັນທະອື່ນໆ ພ້ອມທັງຄ່າປັບໃໝ, ຄ່າຂາຍເຄື່ອງຮິບ, ຄ່າສິ້ນເປືອງຕ່າງໆ ແລະ ຄ່າບຳເນັດ.

8.1.2 ລາຍຮັບ - ລາຍຈ່າຍ ຄ່າບຳເນັດ : ຕ້ອງໃຫ້ຮູ້ໄດ້ວ່າຮັບມາຈາກຄະດີໃດ ?, ຈຳນວນເທົ່າໃດ ? ສ່ວນແບ່ງໃນແຕ່ລະພູດ ແລະ ແຕ່ລະຮ່ວງເທົ່າໃດ ?, ໄດ້ໃຊ້ຈ່າຍແນວໃດ ? ເຫດຜົນໃນການໃຊ້ຈ່າຍແນວໃດ ?, ຍັງເຫຼືອເທົ່າໃດ ແລະ ອື່ນໆ.

8.1.3 ການລາຍງານໃນແຕ່ລະໄລຍະ ແມ່ນໃຫ້ສົ່ງບົດສະຫຼຸບລາຍງານຄົບຊຸດໃຫ້ພະແນກນິຕິກຳ ( ກົມພາສີ ) ເພື່ອສັງລວມທົ່ວປະເທດ, ສ່ວນການລາຍງານສາຍຕັ້ງຂັ້ນເທິງທີ່ຖັດກັບຂັ້ນຂອງຕົນ ຫລື ສາຍຂວາງ ແມ່ນໃຫ້ສຳເນົາບົດສະຫຼຸບອີກຊຸດໜຶ່ງສົ່ງໃຫ້ຕ່າງຫາກເຊັ່ນ: ດ່ານຊາຍແດນ ລາຍງານໃຫ້ພາສີປະຈຳເຂດ ຫລື ພາສີເຂດ ລາຍງານໃຫ້ຫ້ອງວ່າການແຂວງ ເປັນຕົ້ນ.

9. ພະແນກການຂອງກົມພາສີ, ບັນດາພາສີປະຈຳເຂດ ແລະ ດ່ານພາສີຊາຍແດນ ທີ່ເຮັດໜ້າທີ່ສະສາງຄະດີ ຕອ້ງ ***ເປີດບັນຊີເງິນຝາກ*** ຂອງຕົນໄວ້ຢູ່ຄັງເງິນແຫ່ງຊາດບ່ອນທີ່ໃກ້ທີ່ສຸດ ຫຼື ບ່ອນທີ່ມີເງື່ອນໄຂສະດວກ ແລະ ນຳເງິນຄ່າບຳເນັດຝາກໄວ້ ເພື່ອລໍຖ້າການອະນຸມັດຈ່າຍຈາກກົມພາສີ ຕາມທີ່ກຳນົດໄວ້ໃນ (ຂໍ້10) ຂອງແຈ້ງການແນະນຳສະບັບນີ້, ພາຍຫລັງໄດ້ຮັບການອະນຸມັດແລ້ວຈຶ່ງຢື່ນເອກະສານຂໍຖອນນຳຄັງເງິນບ່ອນທີ່ໄດ້ເປີດບັນຊີລໍຖ້ານັ້ນ ເພື່ອຖອນເງິນດັ່ງກ່າວໄປໃຊ້ຈ່າຍຕາມລະບຽບການກຳນົດໃຫ້ທ່ວງທັນກັບເວລາ ແລະ ຕ້ອງມີບັນຊີຕິດຕາມການມອບເງິນເຂົ້າບັນຊີເງິນຝາກ ແລະ ການຖອນເງິນຢ່າງລະອຽດ.

ສະເພາະພະແນກການຂອງກົມພາສີ ( ພະແນກກວດຄືນການແຈ້ງພາສີ, ພະແນກຕ້ານ ແລະ ສະກັດກັ້ນການລັກລອບໜີພາສີ ) ໃຫ້ເປີດເປັນບັນຊີເງິນຝາກຄ່າບຳເນັດດັ່ງກ່າວ ຢູ່ບ່ອນດຽວກັນ ແລະ ໝາຍເລກ ບັນຊີດຽວກັນລວມຢູ່ກົມພາສີ.

10. ການສະເໜີຂໍເບີກຈ່າຍຄ່າບຳເນັດ :

10.1 ບັນດາພະແນກການກ່ຽວຂ້ອງຂອງກົມພາສີ, ພາສີປະຈຳເຂດ, ດ່ານພາສີຊາຍແດນ ຕ້ອງສັງລວມ ແລະ ຈັດສົ່ງ ສຳນວນຄະດີທີ່ໄດ້ສະສາງແລ້ວ ( ສຳນວນຄະດີຄົບຊຸດ, ພ້ອມທັງໃບຄິດໄລ່ຄ່າບຳເນັດ ຂອງແຕ່ລະຄະດີ ) ແລະ ປະກອບໃບສະເໜີຂໍອະນຸຍາດເບີກຈ່າຍຄ່າບຳເນັດ ( ລວມ ) ໃຫ້ພະແນກນິຕິກຳເປັນແຕ່ລະເດືອນ.

10.2 ພະແນກນິຕິກຳ ຈະເຮັດໜ້າທີ່ກວດຄືນໃນການສະສາງຄະດີຂອງແຕ່ລະຄະດີ ຕາມພາລະບົດບາດ, ຖ້າເຫັນວ່າ: ການສະສາງຄະດີຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍພາສີ ພະແນກນິຕິກຳຈະຢັ້ງຢືນຄວາມຖືກຕ້ອງໃຫ້, ແຕ່ຖ້າຄະດີໃດຫາກມີການແກ້ໄຂ ຫລື ສະສາງ ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບລະບຽບກົດໝາຍພາສີ ພະແນກນິຕິກຳຈະຕ້ອງໄດ້ລົງ ກວດກາ-ກວດການ ຄະດີດັ່ງກ່າວຄືນໃໝ່ຢູ່ລັດຖະການພາສີຕົ້ນທາງ.

10.3 ພາຍຫລັງກວດກາຄືນການສະສາງຄະດີສຳເລັດ, ພະແນກນິຕິກຳ ຈະສັງລວມບັນດາຄະດີທີ່ມີການແກ້ໄຂ ຫລື ສະສາງຄະດີຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍພາສີ, ແລ້ວປະກອບເອກະສານນຳສະເໜີຫົວໜ້າກົມພາສີ ເພື່ອອະນຸມັດເບີກຈ່າຍຄ່າບຳເນັດ, ສ່ວນຄະດີທີ່ມີການແກ້ໄຂ ຫລື ສະສາງ ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບລະບຽບກົດໝາຍພາສີ ຈະບໍ່ໄດ້ນຳສະເໜີຫາຫົວໜ້າກົມພາສີ ເພື່ອຂໍການອະນຸມັດໃນການເບີກຈ່າຍຄ່າບຳເນັດເທື່ອ ຈົນກວ່າການແກ້ໄຂ ຫລື ສະສາງຄະດີ ຈະຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍພາສີ ເປັນທີ່ຮຽບຮ້ອຍຈິ່ງຈະສະເໜີຄືນໃໝ່.

11. ການອະນຸຍາດເບີກຈ່າຍຄ່າບຳເນັດ :

11.1 ຫົວໜ້າກົມພາສີ ຫລື ຜູ້ໄດ້ຮັບມອບສິດຈາກຫົວໜ້າກົມພາສີ ຈະເປັນຜູ້ຕົກລົງອະນຸຍາດໃຫ້ລັດຖະການພາສີຂັ້ນຕ່າງໆເບີກຈ່າຍຄ່າບຳເນັດ ຕາມການສະເໜີຂໍອະນຸຍາດເບີກຈ່າຍຄ່າບຳເນັດຂອງພະແນກນິຕິກຳ.

11.2 ພາຍຫລັງມີການຕົກລົງຂອງຫົວໜ້າກົມພາສີ ຫຼື ຜູ້ທີ່ໄດ້ຮັບມອບສິດແລ້ວ ພະແນກນິຕິກຳຈະແຈ້ງໃຫ້ລັດຖະການພາສີຕົ້ນທາງທີ່ກ່ຽວຂ້ອງຊາບ, ພ້ອມທັງສົ່ງສຳນວນຄະດີທີ່ໄດ້ກວດກາແລ້ວ, ໃບຢັ້ງຢືນຜົນການກວດກາ ແລະ ໃບອະນຸຍາດເບີກຈ່າຍຄ່າບຳເນັດ ເພື່ອເກັບມ້ຽນ ແລະ ນຳໃບອະນຸຍາດໄປຖອນເງິນຈາກບັນຊີເງິນຝາກຢູ່ຄັງ ເງິນແຫ່ງຊາດບ່ອນທີ່ຕົນໄດ້ເປີດບັນຊີໄວ້ ເພື່ອນຳເງິນຄ່າບຳເນັດໄປໃຊ້ຈ່າຍ ຫລື ນຳໃຊ້ ຢ່າງເປັນທາງການ ຕາມລະບຽບການ ພາຍໃນກຳນົດ 07 ວັນ.

12. ການອະນຸຍາດໃຫ້ນຳໃຊ້ເງິນຄ່າບຳເນັດໃນຮ່ວງຕ່າງໆ ຂອງພູດບູລະນະກົງຈັກຂອງລັດຖະການພາສີແຕ່ລະຂັ້ນ ໃຫ້ປະຕິບັດດັ່ງນີ້ :

12.1 ຫົວໜ້າກົມພາສີ ເປັນຜູ້ອະນຸຍາດໃນການໃຊ້ຈ່າຍເງິນຄ່າບຳເນັດໃນຮ່ວງບູລະນະກົງຈັກ ຂອງບັນດາພາສີປະຈຳເຂດ, ຂອງບັນດາພະແນກການກ່ຽວຂ້ອງຂອງກົມພາສີ ແລະ ຂອງກົມພາສີ.

12.2 ຫົວໜ້າພາສີປະຈຳເຂດ ເປັນຜູ້ອະນຸຍາດໃນການໃຊ້ຈ່າຍເງິນຄ່າບຳເນັດໃນຮ່ວງບູລະນະກົງຈັກ ຂອງບັນດາດ່ານພາສີຊາຍແດນ ທີ່ຂຶ້ນກັບ.

12.3. ບັນດາດ່ານພາສີຊາຍແດນ, ພາສີປະຈຳເຂດ, ພະແນກການກ່ຽວຂ້ອງຂອງກົມພາສີ, ພະແນກຈັດຕັ້ງ - - ບໍລິຫານ ແລະ ສູນຝຶກ ຕ້ອງຂຶ້ນແຜນການໃຊ້ຈ່າຍ ແລະ ຂໍອະນຸມັດນຳໃຊ້ເງິນຮ່ວງດັ່ງກ່າວ ເປັນແຕ່ລະໄລຍະ ໂດຍອີງໃສ່ຄວາມຈຳເປັນ ແລະ ຄວາມຕ້ອງການຂອງວຽກງານຕົວຈິງ, ດ້ວຍການເຮັດໃບສະເໜີຫາລັດຖະການພາສີຂັ້ນເທິງຂອງຕົນເຊິ່ງມີສິດໃນການຕົກລົງໃຫ້ນຳໃຊ້ເງິນຮ່ວງດັ່ງກ່າວ ຕາມທີ່ໄດ້

ກຳນົດໄວ້ໃນຂໍ້ 12.1 ແລະ 12.2 ຂ້າງເທິງ, ຫລັງຈາກໄດ້ຮັບການອະນຸຍາດແລ້ວ ຈຶ່ງສາມາດນຳໃຊ້ເງິນຮ່ວງດັ່ງກ່າວນັ້ນໄດ້ຢ່າງເປັນທາງການ. ແຕ່ໃນກໍລະນີມີຄວາມຈຳເປັນ, ຮີບດ່ວນ ແລະ ເພື່ອແກ້ໄຂວຽກງານໃຫ້ທັນການ ບັນດາລັດຖະການພາສີທີ່ກ່ຽວຂ້ອງສາມາດນຳໃຊ້ເງິນດັ່ງກ່າວໄດ້ ແຕ່ຕ້ອງໄດ້ລາຍງານໃຫ້ຂັ້ນເທິງຊາບກ່ອນການນຳໃຊ້ , ພ້ອມທັງປະກອບເອກະສານ ສະເໜີຢ່າງເປັນທາງການ ເພື່ອຂໍອະນຸຍາດໃນການເບີກຈ່າຍ ເປັນກໍລະນີສະເພາະ ແລະ ນຳໃຊ້ ຕາມລະບຽບການ.

12.4. ທຸກໆການເບີກຈ່າຍ ແລະ ນຳໃຊ້ ເງິນຄ່າບຳເນັດ ( ບັນດາ ພູດ ແລະ ຮ່ວງຕ່າງໆ ) ຕ້ອງນຳໃຊ້ໃຫ້ຖືກຕາມເປົ້າໝາຍທີ່ລະບຽບການກຳນົດໄວ້ ແລະ ຕ້ອງມີບັນຊີຕິດຕາມໃນການໃຊ້ຈ່າຍ ແຕ່ລະພູດ, ແຕ່ລະຮ່ວງ ຢ່າງລະອຽດ, ຈະແຈ້ງ, ໂປ່ງໃສ ແລະ ສາມາດກວດກາຄືນໄດ້ທຸກເວລາ.

13. ບົດແນະນຳສະບັບນີ້ ແມ່ນລະບຽບການທີ່ນຳໃຊ້ສະເພາະແຕ່ລັດຖະການພາສີ ໃນການຈັດຕັ້ງປະຕິບັດຕາມລະບຽບ ແລະ ກົດໝາຍວ່າດ້ວຍພາສີເທົ່ານັ້ນ, ບັນດາພະແນກການຂອງກົມພາສີ, ບັນດາພາສີປະຈຳເຂດ ແລະ ບັນດາດ່ານພາສີຊາຍແດນໃນທົ່ວປະເທດ ມີໜ້າທີ່ເຜີຍແຜ່ບົດແນະນຳດັ່ງກ່າວນີ້ໃຫ້ແກ່ພະນັກງານພາສີ ແລະ ເຈົ້າໜ້າທີ່ພາສີ ໃນຄວາມຮັບຜິດຊອບຂອງຕົນໄດ້ຮັບຊາບ ແລະ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ, ທົ່ວເຖິງ ທັງເອົາໃຈໃສ່ຈັດຕັ້ງປະຕິບັດດ້ວຍຄວາມເປັນເອກະພາບ ແລະ ເຂັ້ມງວດ.

14. ບົດແນະນຳສະບັບນີ້ມີຜົນສັກສິດໃນການຈັດຕັ້ງປະຕິບັດຊົ່ວຄາວນັບແຕ່ວັນລົງລາຍເຊັນເປັນຕົ້ນໄປຈົນກ່ວາຈະມີລະບຽບການໃໝ່ມາປ່ຽນແທນ.

**ຮັກສາການແທນໜ້າກົມພາສີ**

ບຸນໃຈມ ອຸບົນປະເສີດ